ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 629 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 08 AUG 2016

# ຂໍ້ຕົກລົງ
# ກ່ຽວກັບການກຳນົດອັດຕາຄ່າທຳນຽມສິນເຊື່ອຂອງທະນາຄານທຸລະກິດ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມກ່ຽວຂ້ອງ.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ສ້າງຂຶ້ນມາ ເພື່ອຄຸ້ມຄອງການກຳນົດຄ່າທຳນຽມສິນເຊື່ອຂອງທະນາຄານທຸລະກິດ ຊຶ່ງໃນນີ້ປະກອບມີ: ຄ່າທຳນຽມອະນຸມັດສິນເຊື່ອ ແລະ ຄ່າທຳນຽມດັດແກ້ສັນຍາເງິນກູ້ຂອງທະນາຄານທຸລະກິດ ທີ່ຕັ້ງຢູ່ ສປປ ລາວ ເກັບນຳລູກຄ້າຂອງຕົນ.

**ມາດຕາ 2 ອັດຕາຄ່າທຳນຽມສິນເຊື່ອຂອງທະນາຄານທຸລະກິດ**

ທະນາຄານທຸລະກິດທີ່ຕັ້ງຢູ່ ສປປ ລາວ ສາມາດເກັບຄ່າທຳນຽມສິນເຊື່ອນຳລູກຄ້າ ດັ່ງລຸ່ມນີ້:

1. ອັດຕາຄ່າທຳນຽມອະນຸມັດສິນເຊື່ອ ປະກອບມີຄ່າທຳນຽມອະນຸມັດສິນເຊື່ອ, ຄ່າທຳນຽມເອກະສານຕ່າງໆທີ່ຕິດພັນ ຂອງທະນາຄານທຸລະກິດເອງ (ແບບຟອມການສະເໜີຂໍສິນເຊື່ອ ແລະ ແບບຟອມເອກະສານຕ່າງໆ), ຄ່າທຳນຽມສອບຖາມຂໍ້ມູນຂ່າວສານສິນເຊື່ອ CIB ແລະ ອື່ນໆ ແມ່ນໃຫ້ຄິດໄລ່ຕາມສະກຸນເງິນ ຄື:
   - ອັດຕາຄ່າທຳນຽມອະນຸມັດສິນເຊື່ອ ບໍ່ໃຫ້ເກີນ 1% ຂອງວົງເງິນອະນຸມັດສິນເຊື່ອ ສຳລັບສະກຸນເງິນກີບ;
   - ອັດຕາຄ່າທຳນຽມອະນຸມັດສິນເຊື່ອ ບໍ່ໃຫ້ເກີນ 2% ຂອງວົງເງິນອະນຸມັດສິນເຊື່ອ ສຳລັບສະກຸນເງິນຕາຕ່າງປະເທດ.

2. ອັດຕາຄ່າທຳນຽມການອະນຸມັດສິນເຊື່ອ ໃນຂໍ້ 1 ຂອງມາດຕາ 2 ບໍ່ລວມ ຄ່າທຳນຽມປະເມີນຫຼັກຊັບຄ້ຳປະກັນ, ຄ່າທຳນຽມຈົດທະບຽນສານ, ຄ່າທຳນຽມຈົດທະບຽນຈຳນອງທີ່ດິນ ແລະ ອື່ນໆທີ່ຕິດພັນກັບພາກສ່ວນພາຍນອກ.

3. ອັດຕາຄ່າທຳນຽມດັດແກ້ສັນຍາເງິນກູ້ ເປັນຕົ້ນ ການເພີ່ມວົງເງິນກູ້, ການຕໍ່ສັນຍາເງິນກູ້, ການປ່ຽນເປົ້າໝາຍເງິນກູ້ ແລະ ອື່ນໆ ບໍ່ໃຫ້ເກີນ 1% ຂອງວົງເງິນສິນເຊື່ອທີ່ອະນຸມັດດັດແກ້.

**ມາດຕາ 3 ການປັບໄໝລູກຄ້າທີ່ລະເມີດສັນຍາເງິນກູ້**

ການປັບໄໝລູກຄ້າທີ່ລະເມີດສັນຍາ ແມ່ນໃຫ້ປະຕິບັດຕາມຂໍ້ຕົກລົງວ່າດ້ວຍວິທີການຄິດໄລ່ດອກເບ້ຍເງິນໃຫ້ກູ້ຢືມ ແລະ ການປັບໄໝຂອງທະນາຄານທຸລະກິດ ສະບັບເລກທີ 361/ທຫລ, ລົງວັນທີ 23/04/2012.

**ມາດຕາ 4 ການລະເມີດການກຳນົດອັດຕາຄ່າທຳນຽມສິນເຊື່ອ**

ທະນາຄານທຸລະກິດທີ່ຕັ້ງຢູ່ ສປປ ລາວ ທີ່ບໍ່ປະຕິບັດຕາມຂອບອັດຕາຄ່າທຳນຽມສິນເຊື່ອໃຫ້ກູ້ຢືມທີ່ທະນາຄານແຫ່ງ ສປປ ລາວ ວາງອອກໃນຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ດັ່ງນີ້:

- ຈະຖືກກ່າວເຕືອນເປັນລາຍລັກອັກສອນ ແລະ ພາຍຫຼັງທີ່ໄດ້ຮັບການກ່າວເຕືອນແລ້ວ ຕ້ອງປັບປຸງພາຍໃນ 1 ວັນລັດຖະການ;
- ກໍລະນີຖືກກ່າວເຕືອນ 1 ຄັ້ງແລ້ວ ແຕ່ຍັງບໍ່ປັບປຸງ ຈະຖືກປັບໄໝໃນອັດຕາ 0,01% ຂອງຍອດເຫຼືອສິນເຊື່ອທ້າຍເດືອນ;
- ຖ້າຖືກປັບໄໝ 3 ເດືອນ ຕິດຕໍ່ກັນແລ້ວ ແຕ່ຍັງສືບຕໍ່ລະເມີດຈະຖືກໂຈະ ຫຼື ຈຳກັດການປ່ອຍສິນເຊື່ອ; ຖ້າຍັງສືບຕໍ່ລະເມີດຈະຖືກຖອນໃບອະນຸຍາດການສ້າງຕັ້ງ ແລະ ດຳເນີນຄະດີຕາມກົດໝາຍ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

ໃຫ້ບັນດາທະນາຄານທຸລະກິດທີ່ຕັ້ງຢູ່ໃນ ສປປ ລາວ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ລາຍງານຂໍ້ມູນການຈັດຕັ້ງປະຕິບັດຄ່າທຳນຽມສິນເຊື່ອໃຫ້ກົມຄຸ້ມຄອງທະນາຄານທຸລະກິດ. ພ້ອມທັງແຈ້ງອັດຕາຄ່າທຳນຽມດັ່ງກ່າວໃຫ້ລູກຄ້າຂອງຕົນຊາບໂດຍຜ່ານສື່ຕ່າງໆ ເປັນຕົ້ນ ເວບໄຊ (Website), ຕິດປະກາດຢູ່ກະດານຂ່າວ ຫຼື ອື່ນໆ.

ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ແລະ ບັນດາສາຂາພາກທະນາຄານແຫ່ງ ສປປ ລາວ ເປັນຜູ້ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດຂອງທະນາຄານທຸລະກິດຢ່າງເຂັ້ມງວດ; ກ່າວເຕືອນ ແລະ ປັບໄໝທະນາຄານທຸລະກິດ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ທີ່ລະເມີດຕາມມາດຕະການທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ຢ່າງເຄັ່ງຄັດ. ພ້ອມນັ້ນ, ກໍມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ສັງລວມ ແລະ ແຈ້ງອັດຕາຄ່າທຳນຽມສິນເຊື່ອຂອງທະນາຄານທຸລະກິດທົ່ວລະບົບລົງເວບໄຊ (Website) ຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 6 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ບໍ່ມີຜົນບັງຄັບໃຊ້ກັບການປະຕິບັດຄ່າທຳນຽມສິນເຊື່ອທີ່ທະນາຄານທຸລະກິດໄດ້ກຳນົດກ່ອນໜ້ານີ້.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ດຣ ສົມພາວ ໄຟສິດ